Washington State Department of Social & Health Services
Transforming lives

STATE OF WASHINGTON
DEPARTMENT OF SOCIAL AND HEALTH SERVICES
DIVISION OF CHILD SUPPORT (DCS)

# ລາຍລະອຽດກ່ຽວກັບການບັງຄັບໃຊ້ເລື່ອງເງິນລ້ຽງລູກທີ່ບໍ່ມີການຊ່ວຍເຫລືອ
# Nonassistance Support Enforcement Information

(ມາຕຣາ 26.18, 26.23, 34.05, 74.20 ແລະ 74.20A RCW)

**ຈົ່ງເກັບຮັກສາຟອມໃບນີ້ໄວ້; ມັນບັນຈຸລາຍລະອຽດສໍາຄັນກ່ຽວກັບສໍານວນເອກສານເງິນລ້ຽງລູກຂອງທ່ານ**

## ພາກສ່ວນຕໍ່ຄໍາສັ່ງຈ່າຍເງິນລ້ຽງລູກຂອງທ່ານ

ທັງສອງຝ່າຍຕໍ່ຄໍາສັ່ງຈ່າຍເງິນລ້ຽງລູກຂອງທ່ານແມ່ນພໍ່ແມ່ຜູ້ທີ່ບໍ່ມີຄວາມຄຸ້ມຄອງ ແລະ ພໍ່ແມ່ຜູ້ທີ່ມີຄວາມຄຸ້ມຄອງ ຫລື ຜູ້ຄຸ້ມຄອງຮ່າງກາຍຂອງເດັກ.ພໍ່ແມ່ຜູ້ທີ່ບໍ່ມີຄວາມຄຸ້ມຄອງເປັນບຸກຄົນຜູ້ທີ່ຕ້ອງຈ່າຍເງິນລ້ຽງລູກ.ພໍ່ແມ່ຜູ້ທີ່ມີຄວາມຄຸ້ມຄອງ ຫລື ຜູ້ຄຸ້ມຄອງຮ່າງກາຍຂອງເດັກເປັນບຸກຄົນຜູ້ທີ່ເດັກນ້ອຍອາສັຍຢູ່ນໍາຕາມປົກກະຕິ. ພໍ່ແມ່ຜູ້ທີ່ມີຄວາມຄຸ້ມຄອງ ຫລື ຜູ້ທີ່ບໍ່ມີຄວາມຄຸ້ມຄອງທັງສອງຄົນ ອາດຖືກບັງຄັບໃຫ້ເອົາການຄຸ້ມກັນປະກັນພັຍສຸຂະພາບໃຫ້ ແລະ/ຫລື ການອູ້ມຊູດ້ານພະຍາບານສໍາລັບເດັກນ້ອຍ.

- ການອູ້ມຊູດ້ານພະຍາບານລວມເອົາສ່ວນແບ່ງທີ່ສົມສ່ວນກັນຂອງລາຍຈ່າຍພະຍາບານທີ່ບໍ່ຖືກຮັບປະກັນຈ່າຍໃຫ້ ແລະ ສ່ວນແບ່ງຂອງຄ່າທໍານຽມພະຍາບານ (ການຈ່າຍເງິນສົດ) ຖ້າຖືກກໍານົດໄວ້ໂດຍຄໍາສັ່ງຂອງທ່ານເມື່ອປະກັນພັຍສຸຂະພາບບໍ່ຖືກເອົາໃຫ້.

## ພະແນກເກັບເງິນລ້ຽງລູກ

ພະແນກເກັບເງິນລ້ຽງລູກ (DCS) ມີຫ້ອງການຕັ້ງຢູ່ທົ່ວລັດ. ພະແນກ DCS ກໍາກັບ ແລະ ບັງຄັບໃຊ້ກໍຣະນີເງິນລ້ຽງລູກ. ເພື່ອຈະໃຫ້ພະແນກ DCS ບັງຄັບໃຊ້ຄໍາສັ່ງຈ່າຍເງິນລ້ຽງລູກຂອງທ່ານ, ພາກສ່ວນນຶ່ງຂອງພາກສ່ວນຕໍ່ຄໍາສັ່ງ ຕ້ອງຮ້ອງຂໍເອົາການບໍຣິການບັງຄັບເກັບເງິນລ້ຽງລູກໂດຍທາງລາຍລັກອັກສອນ.

ຖ້າຫາກວ່າຄໍາສັ່ງຈ່າຍເງິນລ້ຽງລູກຂອງທ່ານກໍານົດໃຫ້ມີການຈ່າຍເງິນໂດຍຜ່ານທະບຽນເງິນລ້ຽງລູກຂອງຣັດວໍຊິງຕັນ Washington State Support Registry (ຈົ່ງເບິ່ງພາກສ່ວນຕໍ່ໄປ) ແຕ່ວ່າພະແນກ DCS ບໍ່ໄດ້ຮັບຄໍາຮ້ອງຂໍເອົາການບໍຣິການ,ພະແນກ DCS ຈະເປີດກໍຣະນີການບໍຣິການຈ່າຍເງິນເທົ່ານັ້ນ (PSO) ສໍາລັບທ່ານ.ພະແນກ DCS ຈະເອົາການດໍາເນີນການຈ່າຍເງິນ ແລະ ການຮັກສາບັນທຶກໃຫ້ເທົ່ານັ້ນສໍາລັບກໍຣະນີ PSO.

## ທະບຽນເງິນລ້ຽງລູກຂອງຣັດວໍຊິງຕັນ

ທະບຽນເງິນລ້ຽງລູກຂອງຣັດວໍຊິງຕັນ Washington State Support Registry (WSSR) ເປັນພາກສ່ວນນຶ່ງຂອງພະແນກ DCS ຊຶ່ງເກັບຮັກສາບັນທຶກ ແລະ ແຈກຢາຍການຈ່າຍເງິນລ້ຽງລູກ.ພະແນກ DCS ຈະເອົາຄໍາສັ່ງຈ່າຍເງິນລ້ຽງລູກຂອງທ່ານເຂົ້າໃສ່ໃນ WSSR ເມື່ອເວລາ ບໍ່ວ່າສິ່ງໃດສິ່ງນຶ່ງຂອງສິ່ງຕໍ່ລົງໄປນີ້ເກີດຂຶ້ນ.

1. ບໍ່ວ່າພາກສ່ວນໃດຕໍ່ຄໍາສັ່ງຈ່າຍເງິນລ້ຽງລູກຂອງທ່ານ ຮ້ອງຂໍເອົາການບໍຣິການເກັບເອົາເງິນລ້ຽງລູກນໍາພະແນກ DCS.
2. ຄໍາສັ່ງຈ່າຍເງິນລ້ຽງລູກຂອງທ່ານກໍານົດໃຫ້ພໍ່ແມ່ຜູ້ທີ່ບໍ່ມີຄວາມຄຸ້ມຄອງໃຫ້ຈ່າຍເງິນລ້ຽງລູກໂດຍຜ່ານ WSSR.

## ສິ່ງທີ່ທ່ານຕ້ອງໄດ້ເຮັດ

ເມື່ອທ່ານຮ້ອງຂໍເອົາການບໍຣິການດ້ານການບັງຄັບໃຫ້ເກັບເອົາເງິນລ້ຽງລູກນໍາພະແນກ DCS,ທ່ານຕ້ອງໄດ້:

1. ສົ່ງມາໃຫ້ພະແນກ DCS ເງິນຈ່າຍທຸກໆອັນທີ່ທ່ານໄດ້ຮັບໂດຍກົງຈາກພໍ່ແມ່ຜູ້ທີ່ບໍ່ມີຄວາມຄຸ້ມຄອງ.ພະແນກ DCS ຕ້ອງມີບັນທຶກຂອງການຈ່າຍເງິນທຸກໆເທື່ອເພື່ອຈະເຮັດວຽກໃນກໍຣະນີຂອງທ່ານ. ຖ້າຫາກວ່າທ່ານໄດ້ຮັບການຈ່າຍເງິນລ້ຽງລູກກ່ອນທີ່ທ່ານໄດ້ຮ້ອງຂໍເອົາການບໍຣິການຈາກພະແນກ DCS, ທ ່ານຕ້ອງເອົາໃຫ້ພະແນກ DCS ໃບແຈ້ງການທີ່ບົ່ງລາຍການຂອງການຈ່າຍເງິນເຫລົ່ານັ້ນ. ເມື່ອເວລາທ່ານສົ່ງມາໃຫ້ພະແນກ DCS ການຈ່າຍເງິນທີ່ທ່ານໄດ້ຮັບໂດຍກົງຈາກພໍ່ແມ່ຜູ້ທີ່ບໍ່ມີຄວາມຄຸ້ມຄອງ,ພະແນກ DCS ຈະຖອນເງິນຈໍານວນນັ້ນເຂົ້າໃສ່ໃນບັດມີເງິນ DCS ຂອງທ່ານ ຫລື ຝາກໂອນເງິນຈໍານວນນີ້ເຂົ້າໃສ່ໃນບັນຊີຝາກໂອນເງິນໂດຍກົງຂອງທ່ານ.
2. ບອກໃຫ້ພະແນກ DCS ຊາບຖ້າຫາກວ່າທ່ານປ່ຽນທີ່ຢູ່ ຫລື ເລກໂທຣະສັບຂອງທ່ານ.ພະແນກ DCS ຕ້ອງການລາຍລະອຽດອັນນີ້ເພື່ອຈະຕິດຕໍ່ໄປຫາທ່ານກ່ຽວກັບກໍຣະນີຂອງທ່ານ.ພະແນກ DCS ອາດຈະສົ່ງໃຫ້ຕາມກົດຫມາຍໄປໃຫ້ທ່ານ ໃບແຈ້ງການໂດຍທາງໄປສະນີຊັ້ນນຶ່ງ.
3. ບອກໃຫ້ພະແນກ DCS ຊາບໂດຍທັນທີໂລດຖ້າຫາກວ່າທ່ານເຕົ້າໂຮມນໍາພໍ່ແມ່ຜູ້ທີ່ບໍ່ມີຄວາມຄຸ້ມຄອງ ຫລື ເດັກນ້ອຍໄປຢູ່ບ່ອນອື່ນ. ທ່ານຕ້ອງເອົາໃຫ້ພະແນກ DCS ລາຍລະອຽດເພີ້ມເຕີມເມື່ອຖືກຮ້ອງຂໍເອົາ.
4. ບອກໃຫ້ພະແນກ DCS ຊາບຖ້າຫາກວ່າທ່ານຈ້າງທະນາຍຄວາມ ຫລື ຫ້ອງການເອກຊົນເພື່ອຈະເກັບເອົາເງິນລ້ຽງລູກຂອງທ່ານ. ທ່ານຕ້ອງເອົາໃຫ້ພະແນກ DCS ຊື່ ແລະ ທີ່ຢູ່ຂອງທະນາຍຄວາມ ຫລື ຫ້ອງການເອກຊົນ. ທ່ານຕ້ອງບອກໃຫ້ພະແນກ DCS ຊາບວ່າທະນາຍຄວາມ ຫລື ຫ້ອງການເອກຊົນຈະເຮັດວຽກອັນໃດ.
   a. ພະແນກ DCS ອາດຈະບໍ່ສາມາດທີ່ຈະເກັບເອົາເງິນລ້ຽງລູກຂອງທ່ານໃນຂະນະທີ່ທະນາຍຄວາມ ຫລື ຫ້ອງການເອກຊົນກໍາລັງພະຍາຍາມທີ່ຈະເກັບເອົາເງິນ.
   b. ຖ້າຫາກວ່າທ່ານຈ້າງທະນາຍຄວາມເພື່ອຈະປ່ຽນແປງຄໍາສັ່ງຈ່າຍເງິນລ້ຽງລູກຂອງທ່ານ, ທ່ານ ຫລື ທະນາຍຄວາມຂອງທ່ານຕ້ອງສົ່ງໃຫ້ຕາມກົດຫມາຍ ໃບແຈ້ງການເຖິງພໍ່ແມ່ຜູ້ທີ່ບໍ່ມີຄວາມຄຸ້ມຄອງ ແລະ ພະແນກ DCS.
5. ເອົາໃຫ້ພະແນກ DCS ຫລື ຊ່ວຍພະແນກ DCS ເອົາໂກປີຂອງຄໍາສັ່ງຈ່າຍເງິນລ້ຽງລູກທຸກໆໃບທີ່ໄດ້ຖືກສັ່ງອອກມາສໍາລັບສໍານວນເອກສານຂອງທ່ານ.

## ກົດລະບຽບສຳລັບການຮັບເອົາການບໍລິການບັງຄັບເກັບເງິນລ້ຽງລູກທີ່ບໍ່ມີການຊ່ວຍເຫລືອ

ຖ້າຫາກວ່າທ່ານບໍ່ມີການຄຸ້ມຄອງຂອງເດັກນ້ອຍຕາມກົດຫມາຍສຳລັບຜູ້ທີ່ທ່ານກຳລັງຮ້ອງຂໍເອົາການບໍລິການເກັບເງິນລ້ຽງລູກຢູ່, ທ່ານຕ້ອງແຈ້ງອອກມາວ່າທ່ານບໍ່ໄດ້ເກັບຮັກສາເດັກນ້ອຍໄວ້ຢ່າງມີຄວາມຜິດຈາກຜູ້ຄຸ້ມຄອງຕາມກົດຫມາຍ.

ພະແນກ DCS ເກັບເອົາເງິນຄ່າທຳນຽມ $35 ແຕ່ລະງົບປະມານປີຂອງຣັຖບານກາງທີ່ພະແນກ DCS ສົ່ງເງິນລ້ຽງໄປໃຫ້ທ່ານເປັນຈຳນວນເງິນ $550 ຖ້າຫາກວ່າທ່ານ **ບໍ່ເຄີຍໄດ້ຮັບຈັກເທື່ອ** ເງິນຊ່ວຍເຫລືອຊົ່ວຄາວສຳລັບຄອບຄົວຍາກຈົນ (TANF), ເງິນຊົນເຜົ່າ TANF, ຫລື ການຊ່ວຍເຫລືອໃຫ້ແກ່ຄອບຄົວທີ່ມີເດັກນ້ອຍຫວັງເພິ່ງ (AFDC) ສຳລັບເດັກນ້ອຍຄົນໃດຄົນນຶ່ງ. ງົບປະມານປີເລີ້ມຕົ້ນຕັ້ງແຕ່ເດືອນອົກໂຕເບີ 1st ແລະ ຈົບລົງໃນເດືອນເຊັບເທັມເບີ 30th ຂອງແຕ່ລະປີ.ພະແນກ DCS ເກັບເອົາເງິນຄ່າທຳນຽມອັນນີ້ຈາກທ່ານໂດຍການເກັບເອົາໄວ້ $35 ຈາກການເກັບເອົາເງິນລ້ຽງລູກຫລັງຈາກທີ່ພະແນກ DCS ສົ່ງເງິນໄປໃຫ້ທ່ານ $550 ທຳອິດ.ຖ້າຫາກວ່າທ່ານມີສຳນວນເອກສານຫລາຍກວ່ານຶ່ງອັນຍ້ອນວ່າພວກລູກຂອງທ່ານມີພໍ່ຄົນຕ່າງກັນ, ທ່ານອາດຈະຕ້ອງໄດ້ເສັຽເງິນຄ່າທຳນຽມປະຈຳປີຫລາຍກວ່າເທື່ອນຶ່ງ. ຖ້າຫາກວ່າທ່ານໄດ້ຮັບເງິນ TANF, ເງິນຊົນເຜົ່າ TANF, ຫລື AFDC ຈາກຣັດອື່ນ, ທ່ານຕ້ອງໄດ້ສົ່ງຫລັກຖານມາໃຫ້, ເຊັ່ນວ່າໃບແຈ້ງການທີ່ຖືກສາບານໃສ່ຈາກຫ້ອງການເງິນຊ່ວຍເຫລືອສາທາຣະນະຈາກຣັດອື່ນ ຫລື ໃບໂກປີຂອງບັນທຶກເງິນຊ່ວຍເຫລືອຂອງທ່ານທີ່ຖືກຢັ້ງຢືນ, ໄປຫາພະແນກ DCS. ພະແນກ DCS
ຈະເກັບເອົາເງິນຄ່າທຳນຽມຈົນກວ່າພວກເຮົາຈະໄດ້ຮັບຫລັກຖານ.ຖ້າຫາກວ່າການຈ່າຍເງິນ $35
ກໍ່ໃຫ້ມີຄວາມຫຍຸ້ງຍາກລຳບາກສຳລັບຄອບຄົວຂອງຂ້າພະເຈົ້າ,ຂ້າພະເຈົ້າຈະຂໍເອົາການຍົກເວັ້ນນຳພະແນກ DCS ໂດຍການຮ້ອງຂໍເອົາການປະຊຸມນຳຄະນະກັມມະການ.

## ການບັງຄັບໃຊ້ການເກັບເອົາເງິນລ້ຽງລູກ

ຖ້າຫາກວ່າທ່ານມີຄຳສັ່ງຈ່າຍເງິນລ້ຽງລູກຊຶ່ງໄດ້ກຳນົດຕັ້ງຈຳນວນເງິນລ້ຽງລູກ,ພະແນກ DCS ຈະພະຍາຍາມເກັບເອົາເງິນຈຳນວນນັ້ນ.ພະແນກ DCS ຕາມປົກກະຕິແລ້ວບໍ່ຄິດໄລ່ ແລະ ເກັບເອົາດອກເບັ້ຽຕາມທີ່ມັນຖືກຄິດໄລ່ບວກເຂົ້າໃສ່ຄຳສັ່ງຂອງທ່ານ. ຢູ່ໃນບາງກໍຣະນີ,ພະແນກ DCS ຕ້ອງສົ່ງຕາມກົດຫມາຍໃບແຈ້ງການໄປຫາທັງສອງຝ່າຍຕໍ່ຄຳສັ່ງຈ່າຍເງິນລ້ຽງລູກກ່ອນການເລີ້ມຕົ້ນການກະທຳເກັບເອົາເງິນ.

ຖ້າຫາກວ່າທ່ານບໍ່ມີຄຳສັ່ງຈ່າຍເງິນລ້ຽງລູກ ຫລື ຄຳສັ່ງຈ່າຍເງິນລ້ຽງລູກຂອງທ່ານບໍ່ໄດ້ກ່າວເຖິງເງິນລ້ຽງລູກ ແລະ ການອູ້ມຊູດ້ານການພະຍາບານ,ພະແນກ DCS ຈະສົ່ງຕາມກົດຫມາຍ ໃບແຈ້ງການໄປຫາທັງສອງຝ່າຍຕໍ່ຄຳສັ່ງຈ່າຍເງິນລ້ຽງລູກ.

1. ຢູ່ໃນໃບແຈ້ງການ,ພະແນກ DCS ຈະກຳນົດຕັ້ງຈຳນວນເງິນລ້ຽງລູກ ແລະ ການອູ້ມຊູດ້ານການພະຍາບານຕາມທີ່ຕ້ອງການ.ພະແນກ DCS ຈະອີງຈຳນວນເງິນລ້ຽງລູກໃສ່ລາຍໄດ້ບວກເຂົ້າໃສ່ກັນຂອງທັງສອງຝ່າຍ ແລະ ຈຳນວນເດັກນ້ອຍທີ່ກ່ຽວຂ້ອງນຳ.
2. ຄຳສັ່ງຂອງທ່ານຕ້ອງກຳນົດໃຫ້ພໍ່ແມ່ຜູ້ທີ່ຖືກຜູກມັດແຕ່ລະຄົນໃຫ້ເອົາການຄຸ້ມກັນປະກັນພັຍສຸຂະພາບໃຫ້ເມື່ອການຄຸ້ມກັນມີໄວ້ໃຫ້ໂດຍຜ່ານນາຍຈ້າງ ຫລື ຢູນຽນຂອງພໍ່ແມ່ໂດຍມີຣາຄາທີ່ບໍ່ກາຍເກີນກວ່າ 25 ເປີເຊັນຂອງຄວາມຮັບຜິດຊອບໃນເງິນລ້ຽງລູກພື້ນຖານຂອງພໍ່ແມ່.
3. ຄຳສັ່ງອາດຈະລວມເອົາຄວາມຮັບຜິດຊອບໃນການອູ້ມຊູດ້ານພະຍາບານເງິນສົດໄປໃສ່ຄ່າທຳນຽມທີ່ຖືກຈ່າຍບໍ່ວ່າຈະແມ່ນໂດຍທ່ານ ຫລື ຣັດ ຖ້າຫາກວ່າປະກັນພັຍພະຍາບານບໍ່ໄດ້ຖືກເອົາໃຫ້ໂດຍພໍ່ແມ່ຜູ້ທີ່ຖືກຜູກມັດ.

ຖ້າຫາກວ່າຄຳສັ່ງຈ່າຍເງິນລ້ຽງລູກຂອງທ່ານບໍ່ໄດ້ກຳນົດຕັ້ງຈຳນວນເງິນລ້ຽງລູກຕາຍໂຕ,ແຕ່ວ່າບອກຕຳຣາຄິດໄລ່ເພື່ອຈະພິຈາຣະນາເບິ່ງຈຳນວນເງິນ, ພະແນກ DCS ຈະສົ່ງໃຫ້ຕາມກົດຫມາຍ ***ໃບແຈ້ງການກ່ຽວກັບເງິນລ້ຽງລູກທີ່ຍັງຕິດຫນີ້ຢູ່*** ໄປໃຫ້ທັງສອງຝ່າຍຕໍ່ຄຳສັ່ງຈ່າຍເງິນລ້ຽງລູກຂອງທ່ານ.

1. ຢູ່ໃນໃບແຈ້ງການໃບນີ້, ພະແນກ DCS ຈະກຳນົດຕັ້ງຈຳນວນເງິນລ້ຽງລູກຕາຍໂຕ. ບໍ່ວ່າຝ່າຍໃດຝ່າຍນຶ່ງຕໍ່ຄຳສັ່ງຈ່າຍເງິນລ້ຽງລູກຂອງທ່ານສາມາດຮ້ອງຂໍເອົາການຟັງເຣື່ອງໄດ້ເພື່ອຈະຄັດຄ້ານຈຳນວນເງິນລ້ຽງລູກທີ່ພະແນກ DCS ໄດ້ກຳນົດຕັ້ງ.
2. ພະແນກ DCS ອາດຈະພະຍາຍາມທີ່ຈະຕົກລົງສັນຍາກັນໃຫ້ໄດ້ສຳລັບຈຳນວນເງິນລ້ຽງລູກນຳທັງສອງຝ່າຍຕໍ່ຄຳສັ່ງຈ່າຍເງິນລ້ຽງລູກຂອງທ່ານ.

ເມື່ອໃດຈຳນວນເງິນລ້ຽງລູກໄດ້ຖືກກຳນົດຕັ້ງແລ້ວ ແລະ ຖ້າຫາກວ່າພະແນກ DCS ຮູ້ຈັກນາຍຈ້າງຂອງພໍ່ແມ່ຜູ້ທີ່ບໍ່ມີຄວາມຄຸ້ມຄອງ,ພະແນກ DCS ຈະເຮັດໃບແຈ້ງການ ***ການກັກເອົາເງິນຈາກລາຍໄດ້ສຳລັບເງິນລ້ຽງລູກ*** ອອກໄປໃຫ້ນາຍຈ້າງ.ໃບແຈ້ງການໃບນີ້ບົ່ງໃຫ້ນາຍຈ້າງທີ່ຈະກັກເອົາເງິນລ້ຽງລູກໄວ້ຈາກລາຍໄດ້ ຫລື ເງິນເດືອນຂອງພໍ່ແມ່ຜູ້ທີ່ບໍ່ມີຄວາມຄຸ້ມຄອງ.ຖ້າຫາກວ່າພະແນກ DCS ບໍ່ຮູ້ຈັກນາຍຈ້າງຂອງພໍ່ແມ່ຜູ້ທີ່ບໍ່ມີຄວາມຄຸ້ມຄອງ, ພະແນກ DCS ຈະພະຍາຍາມທີ່ຈະຊອກຫາບ່ອນມາຂອງເງິນເດືອນ ຫລື ລາຍໄດ້ ແລະ ຈະພະຍາຍາມທີ່ຈະເກັບເອົາເງິນລ້ຽງລູກຂອງທ່ານ.

ຖ້າຫາກວ່າຄຳສັ່ງຈ່າຍເງິນລ້ຽງລູກຂອງທ່ານບັນຈຸເງື່ອນໄຂສຳລັບການອູ້ມຊູດ້ານພະຍາບານຂອງເດັກນ້ອຍ. ພະແນກ DCS
ທີ່ຈະພະຍາຍາມທີ່ຈະບັງຄັບໃຊ້ກົດກຳນົດເຫລົ່ານັ້ນ. ການກະທຳທີ່ພະແນກ DCS ເຮັດຈະອີງຕາມເງື່ອນໄຂຂອງຄຳສັ່ງຂອງທ່ານ.

1. ຖ້າຫາກວ່າທ່ານມີຄຳສັ່ງທີ່ບົ່ງໃຫ້ພໍ່ແມ່ຜູ້ທີ່ບໍ່ມີຄວາມຄຸ້ມຄອງທີ່ຈະເອົາການຄຸ້ມກັນປະກັນພັຍສຸຂະພາບໃຫ້,ຈ່າຍສ່ວນແບ່ງທີ່ສົມສ່ວນຂອງລາຍຈ່າຍພະຍາບານທີ່ບໍ່ຖືກຮັບປະກັນ, ເງິນລຸດຜ່ອນລົງ, ແລະ ເງິນຈ່າຍຮ່ວມ, ຫລື
   ຈ່າຍຈຳນວນເງິນເພີ້ມເຕີມເມື່ອພໍ່ແມ່ຜູ້ທີ່ບໍ່ມີຄວາມຄຸ້ມຄອງບໍ່ມີການຄຸ້ມກັນປະກັນພັຍສຸຂະພາບທີ່ມີຢູ່, ພະແນກ DCS
   ຈະບັງຄັບໃຊ້ກົດກຳນົດຂອງການອູ້ມຊູດ້ານການພະຍາບານເຫລົ່ານີ້ແນວໃດແນວນຶ່ງ.
2. ຖ້າຫາກວ່າທ່ານມີຄຳສັ່ງຈ່າຍເງິນລ້ຽງລູກທີ່ບໍ່ບົ່ງໃຫ້ພໍ່ແມ່ຜູ້ທີ່ບໍ່ມີຄວາມຄຸ້ມຄອງທີ່ຈະເອົາປະກັນພັຍສຸຂະພາບໃຫ້ສຳລັບເດັກນ້ອຍຂອງທ່ານ, ພະແນກ DCS ຈະພະຍາຍາມທີ່ຈະດັດແປງຄຳສັ່ງຂອງທ່ານ.
3. ຖ້າຫາກວ່າທ່ານມີຄຳສັ່ງຈ່າຍເງິນລ້ຽງລູກທີ່ບົ່ງໃຫ້ພໍ່ແມ່ຜູ້ທີ່ມີຄວາມຄຸ້ມຄອງທີ່ຈະເອົາປະກັນພັຍສຸຂະພາບໃຫ້, ຈ່າຍສ່ວນແບ່ງທີ່ສົມສ່ວນກັນຂອງລາຍຈ່າຍພະຍາບານທີ່ບໍ່ຖືກຮັບປະກັນ, ເງິນຈ່າຍຮ່ວມກັນ, ແລະ ເງິນຫັກອອກ, ຫລື
   ຈ່າຍສ່ວນແບ່ງຂອງຄ່າທຳນຽມປະກັນພັຍສຸຂະພາບຂອງພໍ່ແມ່ອີກຄົນນຶ່ງຖ້າຫາກວ່າທ່ານບໍ່ເອົາການຄຸ້ມກັນປະກັນພັຍສຸຂະພາບໃຫ້, ພະແນກ DCS
   ຈະບັງຄັບໃຊ້ກົດກຳນົດເຫລົ່ານີ້ຖ້າຫາກວ່າພໍ່ແມ່ຜູ້ທີ່ບໍ່ມີຄວາມຄຸ້ມຄອງຮ້ອງຂໍເອົາການບໍລິການບັງຄັບເກັບເອົາເງິນລ້ຽງດູ.

ຖ້າຫາກວ່າທ່ານມີການຄຸ້ມກັນປະກັນພັຍສຸຂະພາບສຳລັບເດັກນ້ອຍ, ທ່ານຄວນຈະເອົາຫລັກຖານຂອງການຄຸ້ມກັນໃຫ້ພະແນກ DCS. ທ່ານຈະຂຽນປະກອບ ແລະ ສົ່ງກັບຄືນມາ ໃບຟອມ ***ລາຍລະອຽດກ່ຽວກັບປະກັນພັຍສຸຂະພາບຂອງພໍ່ແມ່ຜູ້ທີ່ມີຄວາມຄຸ້ມຄອງ*** ທີ່ຖືກຄັດມານຳນີ້ໃຫ້ເປັນຫລັກຖານໄດ້.

ຖ້າຫາກວ່າທ່ານມີການຄຸ້ມກັນປະກັນພັຍສຸຂະພາບ ແລະ ບໍ່ປາກໃຫ້ພະແນກ DCS
ທີ່ຈະບັງຄັບໃຊ້ກົດກຳນົດຂອງການອູ້ມຊູດ້ານພະຍາບານຂອງຄຳສັ່ງຈ່າຍເງິນລ້ຽງລູກຂອງທ່ານ, ທ່ານຕ້ອງເອົາໃຫ້ພະແນກ DCS ຫລັກຖານຂອງການຄຸ້ມກັນ ແລະ ບອກພະແນກ DCS ໂດຍທາງຫນັງສືວ່າທ່ານບໍ່ຕ້ອງການການບັງຄັບໃຊ້ເງື່ອນໄຂຂອງການອູ້ມຊູດ້ານພະຍາບານ.

ຖ້າຫາກວ່າແມ່ ແລະ ພໍ່ ບໍ່ເຄີຍແຕ່ງງານຈັກເທື່ອ, ແລະ:

1. ຄົນນຶ່ງ ຫລື ທັງສອງຄົນເຂົາເຈົ້າ ບໍ່ໄດ້ເຊັນຊື່ໃສ່ ***ໃບຮັບຮູ້ສາຍເລືອດພໍ່ລູກ,*** ສານຂອງຣັດ ຫລື ຂອງຊົນເຜົ່າຕ້ອງພິຈາຣະນາເບິ່ງພໍ່ຕາມກົດຫມາຍ.ພະແນກ DCS ຈະສົ່ງກໍຣະນີຂອງທ່ານຕໍ່ໄປຫາທະນາຍຄວາມຜູ້ພິພາກສາ, ສານຊົນເຜົ່າ, ຫລື ຫ້ອງການຂອງອັຍຍະການສານສູງສຸດສຳລັບການຟ້ອງຂຶ້ນສານ.
2. ທັງສອງຄົນເຂົາເຈົ້າ ໄດ້ເຊັນຊື່ໃສ່ ແລະ ຍື່ນ ***ໃບຮັບຮູ້ສາຍເລືອດພໍ່ລູກ,*** ພະແນກ DCS ຈະກໍ່ຕັ້ງຄຳສັ່ງຈ່າຍເງິນລັຽງລູກມາໂດຍບໍ່ຕ້ອງມີການຟ້ອງຂຶ້ນສານ.

ຖ້າຫາກວ່າອີກຝ່າຍນຶ່ງຕໍ່ຄຳສັ່ງຈ່າຍເງິນລັຽງລູກຂອງທ່ານຮ້ອງຂໍໃຫ້ພະແນກ DCS ທີ່ຈະເຣັດ, ພະແນກ DCS ອາດຈະເອົາການບໍຣິການບັງຄັບເກັບເອົາເງິນລັຽງລູກເຕັມທີ່ໃຫ້ ເຖິງແມ່ນວ່າທ່ານຈະບໍ່ຕ້ອງການມັນກໍຕາມ. ຖ້າຫາກວ່າບໍ່ມີຝ່າຍໃດຕໍ່ຄຳສັ່ງຈ່າຍເງິນລັຽງລູກອາສັຍຢູ່ໃນຣັດວໍຊິງຕັນ,ພະແນກ DCS ຈະເອົາການບໍຣິການບັງຄັບເກັບເອົາເງິນລັຽງລູກເຕັມທີ່ໃຫ້ຖ້າຫາກວ່າທັງສອງອັນຂອງສິ່ງຕໍ່ລົງໄປນີ້ຫາກເປັນຄວາມຈິງ.

1. ບໍ່ມີຝ່າຍໃດຕໍ່ຄຳສັ່ງຈ່າຍເງິນລັຽງລູກຂອງທ່ານໄດ້ຮັບການບໍຣິການບັງຄັບເກັບເອົາເງິນລັຽງລູກຈາກຣັດອື່ນ.
2. ພໍ່ແມ່ຜູ້ທີ່ບໍ່ມີຄວາມຄຸ້ມຄອງມີການຕິດຕໍ່ນຳຣັດວໍຊິງຕັນ. ການຕິດຕໍ່ລວມເອົາເງິນເດືອນທີ່ເຣັດວຽກເອົາຈາກນາຍຈ້າງຜູ້ທີ່ດຳເນີນກິຈການຄ້າຢູ່ໃນຣັດວໍຊິງຕັນ,ທີ່ເປັນເຈົ້າຂອງຊັບສິນຢູ່ໃນຣັດວໍຊິງຕັນ,ອື່ນໆ.ພໍ່ແມ່ຜູ້ທີ່ບໍ່ມີຄວາມຄຸ້ມຄອງຕ້ອງມີການຕິດຕໍ່ພຽງພໍນຳຣັດວໍຊິງຕັນເພື່ອຈະອະນຸຍາດໃຫ້ພະແນກ DCS ທີ່ຈະເກັບເອົາເງິນລັຽງລູກ.

ຖ້າຫາກວ່າພໍ່ແມ່ຜູ້ທີ່ບໍ່ມີຄວາມຄຸ້ມຄອງອາສັຍຢູ່ໃນຣັດອື່ນ ແລະ ບໍ່ມີການຕິດຕໍ່ນຳຣັດວໍຊິງຕັນ, ແລະ ທ່ານອາສັຍຢູ່ໃນຣັດວໍຊິງຕັນ,ພະແນກ DCS ອາດຈະເຣັດແນວໃດແນວນຶ່ງຂອງສິ່ງຕໍ່ລົງໄປນີ້.

1. ພະຍາຍາມທີ່ຈະກໍ່ຕັ້ງອຳນາດສານສຳລັບກໍຣະນີ ແລະ ເກັບເອົາເງິນລັຽງລູກພາຍໃຕ້ກົດຫມາຍຂອງຣັດວໍຊິງຕັນ.
2. ຮ້ອງຂໍໃຫ້ຣັດບ່ອນທີ່ພໍ່ແມ່ຜູ້ທີ່ບໍ່ມີຄວາມຄຸ້ມຄອງອາສັຍຢູ່ໃນ ທີ່ຈະເກັບເອົາເງິນລັຽງລູກ. ຣັດອື່ນຈະກະທຳລົງໄປພາຍໃຕ້ກົດຫມາຍຂອງເຂົາເຈົ້າ.

ພະແນກ DCS ຈະທຳການທຳການຕົກລົງຈັດແຈງນຳພໍ່ແມ່ຜູ້ທີ່ບໍ່ມີຄວາມຄຸ້ມຄອງສຳລັບການຈ່າຍເງິນລັຽງລູກທີ່ບໍ່ໄດ້ຈ່າຍກາຍຜ່ານມາ.ພະແນກ DCS ໄດ້ອີງການຈ່າຍເງິນອັນນີ້ໃສ່ກົດບັງຄັບໃນເງິນລັຽງລູກທີ່ຖືກກໍ່ຕັ້ງໄວ້ຢູ່ໃນຄຳສັ່ງຈ່າຍເງິນລັຽງລູກຂອງທ່ານ ແລະ ຈຳນວນເງິນທັງຫມົດຂອງເງິນລັຽງລູກທີ່ບໍ່ໄດ້ຈ່າຍກາຍຜ່ານມາທີ່ຍັງຕິດຫນີ້ຢູ່ສຳລັບສຳນວນເອກສານນີ້.
ຖ້າຫາກວ່າທ່ານມີຄຳສັ່ງຈ່າຍເງິນລັຽງລູກທີ່ອະນຸຍາດໃຫ້ພະແນກ DCS ທີ່ຈະສົ່ງໃຫ້ຕາມກົດຫມາຍໃບ***ການກັກເອົາເງິນຈາກຣາຍໄດ້ສຳລັບເງິນລັຽງລູກ,*** ພະແນກ DCS ຈະສົ່ງຕາມກົດຫມາຍໃບຟອມໄປຫານາຍຈ້າງຂອງພໍ່ແມ່ຜູ້ທີ່ບໍ່ມີຄວາມຄຸ້ມຄອງ (ຖ້າຮູ້ຈັກ) .
ຖ້າຫາກວ່າທ່ານມີຄຳສັ່ງຈ່າຍເງິນລັຽງລູກທີ່ບໍ່ອະນຸຍາດໃຫ້ພະແນກ DCS ທີ່ຈະສົ່ງໃຫ້ຕາມກົດຫມາຍໃບ***ການກັກເອົາເງິນຈາກຣາຍໄດ້ສຳລັບເງິນລັຽງລູກ,*** ພະແນກ DCS ຈະສົ່ງໃຫ້ຕາມກົດຫມາຍໃບຟອມ ***ໃບແຈ້ງການກ່ຽວກັບຫນີ້ເງິນລັຽງລູກ ແລະ ການຮຽກຮ້ອງເອົາເງິນ***ໄປໃຫ້ພໍ່ແມ່ຜູ້ທີ່ບໍ່ມີຄວາມຄຸ້ມຄອງ. ***ໃບແຈ້ງການກ່ຽວກັບຫນີ້ເງິນລັຽງລູກ ແລະ ການຮຽກຮ້ອງເອົາເງິນ*** ກ່າວບອກຈຳນວນເງິນລັຽງລູກ ແລະ ເອົາສິດອຳນາດໃຫ້ພະແນກ DCS ທີ່ຈະສົ່ງໃຫ້ຕາມກົດຫມາຍໃບ***ການກັກເອົາເງິນຈາກຣາຍໄດ້ສຳລັບເງິນລັຽງລູກ.***

1. ຖ້າຫາກວ່າທ່ານເປັນຜູ້ອອກຊື່ຈ່າຍເງິນທີ່ຖືກສັ່ງອອກມາໂດຍສານ,ພະແນກ DCS ທີ່ຈະສົ່ງໃບໂກປີຂອງໃບແຈ້ງການໄປໃຫ້ທ່ານທີ່ກ່າວເຖິງ ຈຳນວນເງິນລັຽງລູກ. ຖ້າຫາກວ່າທ່ານໄດ້ຮັບໂກປີໃບນຶ່ງ ແລະ ບໍ່ເຫັນພ້ອມນຳຈຳນວນເງິນທີ່ຖືກກ່າວຢູ່ໃນໃບແຈ້ງການ, ທ່ານຈະຮ້ອງຂໍເອົາການຟັງເຣື່ອງໄດ້.
2. ພໍ່ແມ່ຜູ້ທີ່ບໍ່ມີຄວາມຄຸ້ມຄອງອາດຈະຮ້ອງຂໍເອົາການປະຊຸມນຳລະນະກັມມະການໄດ້ (ການຟັງເຣື່ອງທີ່ບໍ່ເປັນທາງການ) ເພື່ອຈະຄັດຄ້ານເງື່ອນໄຂຂອງໃບແຈ້ງການທີ່ກ່າວເຖິງ ຈຳນວນເງິນລັຽງລູກ. ທ່ານຈະມີສ່ວນໃນການປະຊຸມນຳລະນະກັມມະການອັນນີ້ໄດ້.
3. ຖ້າຫາກວ່າທ່ານຮ້ອງຂໍເອົາການຟັງເຣື່ອງ ແລະ ພໍ່ແມ່ຜູ້ທີ່ບໍ່ມີຄວາມຄຸ້ມຄອງຮ້ອງຂໍເອົາການປະຊຸມນຳລະນະກັມມະການ, ທ່ານສາມາດຕັດສິນໃຈໄດ້ວ່າຈະເອົາການຟັງເຣື່ອງ ຫລື ການປະຊຸມນຳລະນະກັມມະການ.

ຢູ່ໃນການດຳເນີນການຕ່າງໆທີ່ຈະກໍ່ຕັ້ງ, ບັງຄັບໃຊ້, ຫລື ດັດແປງຄຳສັ່ງຈ່າຍເງິນລັຽງລູກ,ພະແນກ DCS ອາດຈະສົ່ງໃຫ້ຕາມກົດຫມາຍຫນັງສືໃບແຈ້ງການໄປຫາພາກສ່ວນຕໍ່ໃບຄຳສັ່ງໂດຍທາງໄປສະນີຊັ້ນນຶ່ງ.ພະແນກ DCS ອາດຈະສົ່ງໃຫ້ຕາມກົດຫມາຍຫນັງສືໃບແຈ້ງການເຫລົ່ານີ້ໄປຫາທີ່ຢູ່ຂອງພາກສ່ວນບ່ອນທີ່ຮູ້ຈັກສຸດທ້າຍຫມູ່. ຖ້າຫາກວ່າພະແນກ DCS ສົ່ງໃຫ້ຕາມກົດຫມາຍຫນັງສືໃບແຈ້ງການໄປຫາທ່ານ, ມັນອາດຈະກາຍເປັນຄຳສັ່ງສຸດຂາດໂດຍປາສຈາກໃບແຈ້ງການຕໍ່ມາໃດໆໄປຫາທ່ານອີກ. ສານ ຫລື ຈ່າສານອຳນາດການປົກຄອງ (ALJ) ອາດຈະອະນຸມັດການຟ້ອງຮ້ອງຂຶ້ນສານສຳລັບການດັດແປງຄຳສັ່ງຈ່າຍເງິນລັຽງລູກໂດຍໄປໃນຕົວເອງ ຖ້າຫາກວ່າພາກສ່ວນນຶ່ງຜິດພາດບໍ່ມາປາກົດຕົວໃນການດຳເນີນການດັດແປງ. ອັນນີ້ກ່ຽວຂ້ອງນຳ ເຖິງແມ່ນວ່າພະແນກ DCS ບໍ່ສາມາດພິສູດວ່າພາກຝ່າຍຜູ້ທີ່ຜິດພາດບໍ່ມາປາກົດຕົວ ວ່າໄດ້ຮັບໃບແຈ້ງການກ່ຽວກັບການຟັງເຣື່ອງແທ້ຈິງ ຫລືບໍ່ ຊຶ່ງຖືກສົ່ງອອກໄປໂດຍໄປສະນີຊັ້ນນຶ່ງໄປຫາບ່ອນທີ່ຮູ້ຈັກສຸດທ້າຍຫມູ່ຂອງພາກຝ່າຍ.
ພະແນກ DCS ບໍ່ສາມາດກໍ່ຕັ້ງ ຫລື ບັງຄັບໃຊ້ເງື່ອນໄຂຂອງການຄຸ້ມຄອງ ຫລື ການປັຽມປາມສຳລັບເດັກນ້ອຍຂອງທ່ານ.

## ການເປັນຕົວແທນ

ພະແນກ DCS ແລະ ຫ້ອງການອັຍຍະການສານສູງສຸດ ແລະ ຫ້ອງການທະນາຍຄວາມຜູ້ພິພາກສາບ່ອນທີ່ເຣັດວຽກນຳພະແນກ DCS ຈະເປັນຕົວແທນໃຫ້ກົມສັງຄົມ ແລະ ສົງເຄາະ. ຫ້ອງການເຫລົ່ານີ້ບໍ່ໄດ້ເປັນຕົວແທນຝ່າຍໃດຝ່າຍນຶ່ງຕໍ່ຄຳສັ່ງຈ່າຍເງິນລັຽງລູກຂອງທ່ານ.

## ການຟັງເຣື່ອງ

ມາດຕຣາ RCW 34.05 ອະນຸຍາດໃຫ້ທັງສອງຝ່າຍຕໍ່ຄຳສັ່ງຈ່າຍເງິນລັຽງລູກຂອງທ່ານທີ່ຈະມີສ່ວນໃນການຟັງເຣື່ອງທີ່ຖືກຈັດຂຶ້ນກ່ຽວກັບຄຳສັ່ງຈ່າຍເງິນລັຽງລູກຂອງທ່ານ. ບໍ່ວ່າຝ່າຍໃດຝ່າຍນຶ່ງຈະເຂົ້າມາຮ່ວມນຳການຟັງເຣື່ອງໄດ້ໂດຍຕົນເອງ ຫລື ທາງໂທຣະສັບ. ການຟັງເຣື່ອງສະທ້ອນເຖິງຈຳນວນເງິນລັຽງລູກຂອງທ່ານ. ຖ້າຫາກວ່າທ່ານບໍ່ເຂົ້າຮ່ວມໃນການຟັງເຣື່ອງ, ຈ່າສານ ALJ ອາດຈະອະນຸມັດຄຳຮ້ອງທີ່ຖືກເຣັດໂດຍພະແນກ DCS ຫລື ອີກຝ່າຍນຶ່ງຕໍ່ຄຳສັ່ງຈ່າຍເງິນລັຽງລູກຂອງທ່ານໂດຍປາສຈາກໃບແຈ້ງການຕໍ່ມາສົ່ງໄປຫາທ່ານ. ທ່ານອາດຈະຕ້ອງການທະນາຍຄວາມກົດຫມາຍທີ່ຈະເປັນຕົວແທນຂອງທ່ານໃນເວລາຂອງການຟັງເຣື່ອງ.

## ການບັນເທົາທຸກ

ກົດຫມາຍຂອງຣັດວໍຊິງຕັນອະນຸຍາດໃຫ້ເງິນລ້ຽງລູກທີ່ຈະຖືກລຸດລົງຊົ່ວຄາວຖ້າຫາກວ່າພໍ່ແມ່ຜູ້ທີ່ບໍ່ມີຄວາມຄຸ້ມຄອງໄດ້ຖືກກັກຂັງຕົວ ຫລື ຖືກຕັດສິນລົງໂທດໃສ່ຢ່າງຫນ້ອຍຫົກເດືອນຢູ່ໃນຄຸກໃຫຍ່, ຄຸກນ້ອຍ, ຫລື ສະຖານທີ່ດັດສ້າງແລະບໍ່ມີຄວາມສາມາດທີ່ຈະຈ່າຍເງິນລ້ຽງລູກ.ການດໍາເນີນການອັນນີ້ໄດ້ຖືກເອີ້ນວ່າການບັນທຶກທຸກ.ທ່ານ, ພໍ່ແມ່ຜູ້ທີ່ບໍ່ມີຄວາມຄຸ້ມຄອງ, ຫລື DCS ສາມາດຮ້ອງຂໍເອົາການບັນທຶກທຸກໄດ້. ຖ້າຫາກວ່າການບັນທຶກທຸກຖືກວາງໃຊ້ໃສ່ສໍານວນເອກະສານຂອງທ່ານ, ທ່ານຈະໄດ້ຮັບໃບແຈ້ງການຈາກ DCS ທີ່ຈະອະທິບາຍເງື່ອນໄຂຂອງການບັນທຶກທຸກ ແລະ ສິດທິຂອງແຕ່ລະຄົນທີ່ຈະຮ້ອງຂໍເອົາການຟັງເລື່ອງຖ້າຫາກວ່າເຂົາເຈົ້າບໍ່ເຫັນພ້ອມນໍາ.

## ການບໍລິການດ້ານການເກັບເອົາເງິນ

ພະແນກ DCS ຈະພະຍາຍາມທີ່ຈະ:

1. ເກັບເອົາເງິນລ້ຽງລູກປັດຈຸບັນ ແລະ ບໍ່ໄດ້ຈ່າຍກາຍຜ່ານມາ (ຖ້າມີຢູ່).
   - ພາຍໃຕ້ສະພາບການຈໍາກັດ, ພະແນກ DCS ອາດຈະເຣັດສັນຍາຊົ່ວຄາວອອກມາຊຶ່ງຈະອະນຸຍາດໃຫ້ພໍ່ແມ່ຜູ້ທີ່ບໍ່ມີຄວາມຄຸ້ມຄອງທີ່ຈະຈ່າຍເງິນຫນ້ອຍກວ່າຈໍານວນເງິນລ້ຽງລູກປັດຈຸບັນປະຈໍາເດືອນທີ່ຖືກບົ່ງຢູ່ໃນຄໍາສັ່ງຈ່າຍເງິນລ້ຽງລູກຂອງທ່ານ.ການຈ່າຍເງິນເພີ້ມຂຶ້ນໃນເວລາຕໍ່ມາເພື່ອຈະອະນຸຍາດໃຫ້ພະແນກ DCS ທີ່ຈະເກັບເອົາເງິນລ້ຽງລູກປັດຈຸບັນ ແລະ ບໍ່ໄດ້ຈ່າຍກາຍຜ່ານມາທັງຫມົດຄືນມາ.
2. ເກັບເອົາເງິນດອກເບັ້ຽໃສ່ເງິນລ້ຽງລູກບໍ່ໄດ້ຈ່າຍກາຍຜ່ານມາທັງຫມົດ.ພະແນກ DCS ຈະເຣັດແນວນີ້ເທົ່ານັ້ນຖ້າຫາກວ່າທ່ານມີຄໍາສັ່ງຈ່າຍເງິນລ້ຽງລູກ ຫລືການຕັດສິນຈາກສານຂອງຊົນເຜົ່າຊຶ່ງກ່າວບອກຈໍານວນເງິນທັງຫມົດຂອງດອກເບັ້ຽທີ່ຖືກຄິດໄລ່ໃສ່.
3. ເກັບເອົາເງິນຄ່າຝາກລູກ, ຖ້າຫາກຖືກບົ່ງຢູ່ໃນຄໍາສັ່ງຈ່າຍເງິນລ້ຽງລູກຂອງທ່ານ.
4. ເກັບເອົາເງິນລ້ຽງຄູ່ຜົວເມັຽ (ເງິນລ້ຽງຜົວເມັຽ) ຖ້າຫາກຖືກບົ່ງຢູ່ໃນຄໍາສັ່ງຈ່າຍເງິນລ້ຽງລູກຂອງທ່ານ.ພະແນກ DCS ບໍ່ໄດ້ກໍ່ຕັ້ງຈໍານວນເງິນລ້ຽງຄູ່ຜົວເມັຽ.
5. ບັງຄັບໃຊ້ກົດກໍານົດໃຫ້ມີການອູ້ມຊູດ້ານການພະຍາບານ. ພະແນກ DCS ອາດຈະພະຍາຍາມທີ່ຈະເກັບເອົາເງິນຣາຍຈ່າຍພະຍາບານທີ່ບໍ່ທັນຖືກໃຊ້ເງິນແທນຄືນເທື່ອ (ເຊັ່ນວ່າເງິນຈ່າຍຮ່ວມກັນ, ເງິນຫັກອອກ, ແລະ ເງິນຄ່າທໍານຽມ) ສໍາລັບເດັກນ້ອຍຜູ້ທີ່ຖືກຄຸ້ມກັນໂດຍຄໍາສັ່ງໂດຍການໃຊ້ວິທີທາງແກ້ໄຂທີ່ມີໄວ້ພາຍໃຕ້ມາດຕຣາ 74.20 ແລະ RCW 74.20A RCW. ຣາຍຈ່າຍພະຍາບານທີ່ບໍ່ຖືກຮັບປະກັນໄດ້ຖືກຕີຄວາມຫມາຍຢູ່ໃນກົດຫມາຍ WAC 388-14A-1020. ພະແນກ DCS ອາດຈະສົ່ງໃຫ້ຕາມກົດຫມາຍ *ໃບແຈ້ງການອູ້ມຊູດ້ານການພະຍາບານແຫ່ງຊາດ* ໄປໃຫ້ເພື່ອຈະບັງຄັບໃຊ້ກົດກໍານົດເຣື່ອງປະກັນພັຍສຸຂະພາບ ຫລື ບັງຄັບໃຊ້ການບໍລິຈາກເງິນສິດບໍ່ໃຫ້ກາຍສ່ວນແບ່ງຂອງຣາຍຈ່າຍທີ່ສົມສ່ວນກັນຂອງພໍ່ແມ່ຜູ້ຖືກຜູກມັດ,ຈໍາກັດໄປເຖິງ 25 ເປີເຊັນຂອງຄວາມຮັບຜິດຊອບພື້ນຖານຂອງພໍ່ແມ່.
6. ບັງຄັບໃຫ້ມີການອູ້ມຊູດ້ານການສຶກສາຫລັງຈາກມັທຍົມພາກສອງສໍາລັບເດັກນ້ອຍຜູ້ທີ່ດໍາເນີນການສຶກສາຂອງເຂົາເຈົ້າຫລັງຈາກສໍາເຣັດຣາຍສະກູລແລ້ວ. ມີແຕ່ສານຊົນເຜົ່າຂອງຣັດເທົ່ານັ້ນສາມາດອອກຄໍາສັ່ງການອູ້ມຊູຊະນິດນີ້.ພະແນກ DCS ບໍ່ສາມາດກໍ່ຕັ້ງການອູ້ມຊູຊະນິດນີ້.

ທ່ານບໍ່ຕ້ອງໄດ້ຮ້ອງຂໍໃຫ້ພະແນກ DCS ທີ່ຈະທໍາການກະທໍາທີ່ຖືກບົ່ງຢູ່ໃນພາກສ່ວນນີ້.ພະແນກ DCS ດໍາເນີນການຕາມທີ່ກໍຣະນີຂອງທ່ານກໍານົດໄວ້. ເຖິງຢ່າງໃດກໍຕາມ, ທ່ານອາດຈະພົບເຫັນຣາຍຣະອຽດອັນໃຫມ່ຊຶ່ງຈະສາມາດຊ່ວຍໃຫ້ພະແນກ DCS ທີ່ຈະເກັບເອົາເງິນລ້ຽງລູກຂອງທ່ານ. ຖ້າຫາກວ່າທ່ານພົບເຫັນ, ທ່ານຕ້ອງບອກພະແນກ DCS. ຈົ່ງລວມເອົາຣາຍຣະອຽດຕໍ່ລົງໄປນີ້ໃສ່ໃນຫນັງສືຕິດຕໍ່ມາຕ່າງໆນໍາພະແນກ DCS.

1. ຊື່ຂອງທ່ານ, ທີ່ຢູ່, ເລກໂທຣະສັບ, ແລະ ເລກເອກສານ.
2. ຊື່ຂອງພໍ່ແມ່ຜູ້ທີ່ບໍ່ມີຄວາມຄຸ້ມຄອງ ແລະ ເລກໂຊໂຊ (ຖ້າຫາກຮູ້ຈັກ).

## ການຢຸດການບໍລິການຂອງພະແນກ DCS

ຖ້າຫາກວ່າທ່ານຕ້ອງການໃຫ້ພະແນກ DCS ທີ່ຈະຢຸດການບໍລິການເກັບເອົາເງິນເຕັມທີ່, ທ່ານຕ້ອງຮ້ອງຂໍນໍາພະແນກ DCS ໂດຍທາງລາຍລັກອັກສອນ. ຖ້າຫາກວ່າທ່ານມີຄໍາສັ່ງຈ່າຍເງິນລ້ຽງລູກທີ່ກໍານົດໃຫ້ພໍ່ແມ່ຜູ້ທີ່ບໍ່ມີຄວາມຄຸ້ມຄອງທີ່ຈະຈ່າຍເງິນລ້ຽງລູກໂດຍຜ່ານພະແນກ WSSR, ພະແນກ DCS ຈະຢຸດເອົາການບໍລິການເກັບເອົາເງິນເຕັມທີ່ໃຫ້, ປ່ຽນກໍຣະນີຂອງທ່ານມາເປັນ PSO, ແລະ ບອກພໍ່ແມ່ຜູ້ທີ່ບໍ່ມີຄວາມຄຸ້ມຄອງ.ຖ້າຫາກວ່າຄໍາສັ່ງຈ່າຍເງິນລ້ຽງລູກຂອງທ່ານບໍ່ໄດ້ກໍານົດໃຫ້ມີການຈ່າຍເງິນໂດຍຜ່ານ WSSR, ພະແນກ DCS ຈະປິດເອກສານຂອງທ່ານ.

ຖ້າຫາກວ່າທ່ານ ຫລື ເດັກນ້ອຍຂອງທ່ານເຕົ້າໂຮມຄືນນໍາພໍ່ແມ່ຜູ້ທີ່ບໍ່ມີຄວາມຄຸ້ມຄອງ, ພະແນກ DCS ຈະຢຸດການການເກັບເອົາເງິນລ້ຽງລູກປັດຈຸບັນ. ພະແນກ DCS ຈະບອກທ່ານກ່ຽວກັບການປ່ຽນແປງຕ່າງໆໃນຊະນິດຂອງການບໍລິການທີ່ທ່ານໄດ້ຮັບ.

## ການໄລ່ສະເລັ່ຽໃສ່ເງິນສົ່ງຄືນໃນພາສີຣາຍໄດ້ຂອງຣັຖບານກາງ, ການໄລ່ສະເລັ່ຽຂອງພະແນກບໍຣິຫານ, ແລະ ການປະຕິເສດຫນັງສືເດີນທາງ

ພະແນກ DCS ຈະບອກພະແນກງົບປະມານພາຍໃນ (IRS) ເມື່ອເວລາພໍ່ແມ່ຜູ້ທີ່ບໍ່ມີຄວາມຄຸ້ມຄອງຕິດຫນີ້ເງິນລ້ຽງລູກທີ່ບໍ່ໄດ້ຈ່າຍກາຍຜ່ານມາ ຖ້າຫາກວ່າພະແນກ DCS ຮູ້ຈັກເລກໂຊໂຊຂອງພໍ່ແມ່ຜູ້ທີ່ບໍ່ມີຄວາມຄຸ້ມຄອງ ແລະ ກໍຣະນີຂອງທ່ານສອດຄ່ອງນໍາກົດເກນຕໍ່ລົງໄປນີ້ທຸກໆຢ່າງ:

1. ພະແນກ DCS ຮູ້ຈັກເລກໂຊໂຊຂອງພໍ່ແມ່ຜູ້ທີ່ບໍ່ມີຄວາມຄຸ້ມຄອງ.
2. ຫນີ້ເງິນລ້ຽງລູກທີ່ບໍ່ໄດ້ຈ່າຍກາຍຜ່ານມາ ຍັງຕິດຫນີ້ຢູ່ພາຍໃຕ້ຄໍາສັ່ງຈ່າຍເງິນລ້ຽງລູກ.
3. ພໍ່ແມ່ຜູ້ທີ່ບໍ່ມີຄວາມຄຸ້ມຄອງຕິດຫນີ້ເງິນລ້ຽງລູກທີ່ບໍ່ໄດ້ຈ່າຍກາຍຜ່ານມາທັງຫມົດເປັນຈໍານວນ $500.00 ຫລື ຫລາຍກວ່າ. ຖ້າຫາກວ່າພະແນກ DCS ບໍ່ສາມາດພິຈາຣະນາເບິ່ງເງິນລ້ຽງລູກທີ່ບໍ່ໄດ້ຈ່າຍກາຍຜ່ານມາທັງຫມົດທີ່ຍັງຕິດຫນີ້ຢູ່,ພະແນກ DCS ອາດຈະຈໍາກັດຂອບເຂດຂອງຫນີ້ໃສ່ຈໍານວນທີ່ຖືກບວກສະສົມມາຕັ້ງແຕ່ເມື່ອພະແນກ DCS ໄດ້ຮັບເອົາກໍຣະນີຂອງທ່ານ.

ພະແນກ IRS ສົ່ງໄປໃຫ້ພະແນກ DCS ເງິນພາສີຣາຍໄດ້ສົ່ງຄືນຂອງພໍ່ແມ່ຜູ້ທີ່ບໍ່ມີຄວາມຄຸ້ມຄອງເພື່ອຈະຈ່າຍເງິນລ້ຽງລູກທີ່ບໍ່ໄດ້ຈ່າຍກາຍຜ່ານມາທີ່ຍັງຕິດຄ້າງຢູ່.

ຖ້າຫາກວ່າພໍ່ແມ່ຜູ້ທີ່ບໍ່ມີຄວາມຄຸ້ມຄອງຍື່ນໃບພາສີຣາຍໄດ້ສົ່ງຄືນຮ່ວມກັນ,ພະແນກ DCS ອາດຈະກັກເອົາເງິນສົ່ງຄືນໄວ້ຮອດເຖິງຫົກເດືອນກ່ອນທີ່ຈະສົ່ງເງິນໄປໃຫ້ທ່ານ. ພະແນກ DCS ອາດຈະກັກເອົາເງິນພາສີຣາຍໄດ້ສົ່ງຄືນໄວ້ເພື່ອຈະອະນຸຍາດໃຫ້ຜູ້ຍື່ນຮ່ວມກັນອີກຝ່າຍນຶ່ງຂອງໃບພາສີຣາຍໄດ້ສົ່ງຄືນທີ່ຈະທວງເອົາສ່ວນຂອງເງິນພາສີຣາຍໄດ້ສົ່ງຄືນຂອງເຂົາເຈົ້າ.

ການຈ່າຍເງິນອື່ນໆທີ່ຍັງຕິດຄ້າງໂດຍຣັຖະບານກາງຕໍ່ພໍ່ແມ່ຜູ້ບໍ່ມີຄວາມຄຸ້ມຄອງອາດຈະຖືກໄລ່ສະເລັ່ຽຫັກອອກເພື່ອຈະຈ່າຍເງິນລ້ຽງລູກທີ່ບໍ່ໄດ້ຈ່າຍກາຍຜ່ານມາ.

ຖ້າຫາກວ່າພໍ່ແມ່ຜູ້ບໍ່ມີຄວາມຄຸ້ມຄອງຕິດຫນີ້ຢູ່ຢ່າງຫນ້ອຍ $2,500.00, ຣັຖະບານກາງສາມາດປະຕິເສດໃບຫນັງສືເດີນທາງຂອງພໍ່ແມ່ຜູ້ບໍ່ມີຄວາມຄຸ້ມຄອງ.

## ການແຈກຢາຍການຈ່າຍເງິນ

ມັນມີກົດລະບຽບຂອງຣັຖບານກາງ ແລະ ຂອງຣັດອັນເຄັ່ງຄັດສຳລັບການແຈກຢາຍເງິນລ້ຽງລູກ. ພະແນກ DCS ໃຊ້ວັນທີທີ່ໄດ້ຮັບການຈ່າຍເງິນເພື່ອຈະຕັດສິນວ່າຈະໃຊ້ເງິນລ້ຽງລູກຢ່າງໃດ. ບໍ່ມີຝ່າຍໃດຕໍ່ຄຳສັ່ງຈ່າຍເງິນລ້ຽງລູກຈະສາມາດເລືອກເອົາຣະຍະເວລາທີ່ການຈ່າຍເງິນກວມເອົາ.

1. ພະແນກ DCS ຈະເອົາເງິນຕ່າງໆທີ່ໄດ້ຮັບໃນແຕ່ລະເດືອນ, ຍົກເວັ້ນເງິນພາສີຣາຍໄດ້ສົ່ງຄືນຈາກພະແນກ IRS, ກ່ອນອື່ນໄປໃສ່ເງິນລ້ຽງລູກປັດຈຸບັນຂອງເດືອນນັ້ນ. ການຈ່າຍເງິນຂອງພະແນກ IRS ຈະຖືກຖືກໄລ່ໃສ່ແຕ່ເງິນລ້ຽງລູກບໍ່ໄດ້ຈ່າຍກາຍຜ່ານມານເທົ່ານັ້ນ.
2. ພະແນກ DCS ຈະເກັບເອົາເງິນຈ່າຍຄ່າທຳນຽມປະຈຳປີ $35 ໄວ້, ຖ້າຫາກວ່າທ່ານບໍ່ເຄີຍໄດ້ຮັບເງິນ TANF, ເງິນອຸດໜຸນເຜົ່າ TANF, ຫລື AFDC ຈັກເທື່ອ ໃນຖານະເປັນຜູ້ປົກຄອງຂອງເດັກນ້ອຍຕ່ຳກວ່າກະສຽນ. ພະແນກ DCS ຈະເອົາເງິນຄ່າທຳນຽມ,ຫລັງຈາກທີ່ເງິນລ້ຽງລູກ $550 ໄດ້ຖືກເບີກອອກໃຫ້ທ່ານແລ້ວ ໃສ່ກໍຣະນີຂອງທ່ານໃນຣະຫວ່າງເດືອນອົກໂຕເບີ 1st ແລະ ເດືອນເຊັບເທັມເບີ 30th ຂອງແຕ່ລະປີ.
3. ຖ້າຫາກວ່າພະແນກ DCS ໄດ້ຮັບເງິນຫລາຍກວ່າຈຳນວນເງິນລ້ຽງລູກປັດຈຸບັນ, ພະແນກ DCS ຈະເອົາເງິນຈ່າຍເພີ້ມເຕີມໃສ່ເງິນລ້ຽງລູກທີ່ບໍ່ໄດ້ຈ່າຍກາຍຜ່ານມາ.
4. ຖ້າຫາກວ່າພໍ່ແມ່ຜູ້ທີ່ບໍ່ມີຄວາມຄຸ້ມຄອງຕິດໜີ້ເງິນລ້ຽງລູກປັດຈຸບັນຫລາຍກ່ວາຄອບຄົວນຶ່ງ,ພະແນກ DCS ເອົາເງິນຈ່າຍມາໃສ່ເງິນລ້ຽງລູກປັດຈຸບັນຕ່າງໆກ່ອນທີ່ຈະເອົາເງິນຕ່າງໆໄປໃສ່ເງິນລ້ຽງລູກທີ່ບໍ່ໄດ້ຈ່າຍກາຍຜ່ານມາ. ບໍ່ວ່າທ່ານ ຫລື ພໍ່ແມ່ຜູ້ທີ່ບໍ່ມີຄວາມຄຸ້ມຄອງສາມາດເຈາະຈົງວາພະແນກ DCS ຈະແຈກຢາຍເງິນຢ່າງໃດ.
   - ມັນມີການຍົກເວັ້ນອັນນຶ່ງຕໍ່ກົດຣະບຽບຂ້າງເທິງນີ້.
     ພໍ່ແມ່ຜູ້ທີ່ບໍ່ມີຄວາມຄຸ້ມຄອງສາມາດເຈາະຈົງການແຈກຢາຍເງິນຈ່າຍມາໄປໃສ່ກໍຣະນີຂອງການບໍຣິການດ້ານການຈ່າຍເງິນເທົ່ານັ້ນ (PSO).
     PSO ອີງໃສ່ກໍຣະນີເຫລົ່ານີ້ເມື່ອພະແນກ DCS ໃຫ້ການຮັກສາບັນທຶກ ແລະ ການແຈກຢາຍເງິນລ້ຽງລູກ
     ແຕ່ວ່າບໍ່ໄດ້ບັງຄັບໃຊ້ຄຳສັ່ງຈ່າຍເງິນລ້ຽງລູກ.

ພະແນກ DCS ຈະສົ່ງເງິນລ້ຽງລູກປັດຈຸບັນໄປໃຫ້ທ່ານ. ຖ້າຫາກວ່າທ່ານຈົດຊື່ນຳການໂອນເງິນເຂົ້າໂດຍກົງ, ພະແນກ DCS ຈະໂອນເງິນຈ່າຍມາເຂົ້າໃສ່ໂດຍກົງໃນບັນຊີທະນາຄານຂອງທານ ໂດຍການໂອນເງິນທຶນທາງເອເລກໂຕຣນິກ (EFT).

**ໝາຍເຫດ: ຖ້າຫາກວ່າທ່ານບໍ່ໄດ້ອະນຸຍາດການໂອນເງິນເຂົ້າໂດຍກົງ, ພະແນກ DCS ຈະສົ່ງໄປໃຫ້ທ່ານໂດຍອັຕໂນມັດໂລດບັດ Visa ຈ່າຍເງິນທີ່ມີເງິນເກັບໄວ້ ຊຶ່ງຖືກເອີ້ນວ່າບັດເງິນ DCS.** ຖ້າຫາກວ່າທ່ານມີບັດເງິນ DCS, ພະແນກ DCS ຈະໂອນເງິນລ້ຽງລູກຂອງທ່ານເຂົ້າໃສ່ບັດແທນທີ່ວ່າຈະເຂົ້າບັນຊີທະນະຄານຂອງທ່ານ. ຢູ່ໃນກໍຣະນີສ່ວນຫລາຍ, ເງິນຈ່າຍມາສຳລັບເງິນລ້ຽງລູກຈະມີໄວ້ໃຫ້ໃນບັນຊີທະນາຄານຂອງທ່ານ ຫລື ບັດເງິນ DCS ຂອງທ່ານພາຍໃນສາມວັນເຮັດການ ຫລັງຈາກທີ່ພະແນກ DCS ເອົາມັນໃສ່ໃນກໍຣະນີຂອງທ່ານ. ທ່ານສາມາດໃຊ້ບັດເງິນ DCS ຢູ່ທຸກໆບ່ອນທີ່ບັດ VISA ຖືກຮັບເອົາ ແລະ ຢູ່ຕາມເຄື່ອງຈັກຖອນເງິນ.
ທ່ານສາມາດໄດ້ຮັບຣາຍຣະອຽດເພີ້ມເຕີມກ່ຽວກັບການຈ່າຍເງິນທາງເອເລກໂຕຣນິກ. ຂອກຮູ້ເພີ້ມເຕີມກ່ຽວກັບທົນທາງເລືອກທາງອື່ນຂອງທ່ານສຳລັບການຮັບເອົາການຈ່າຍເງິນ, ໂດຍການໂທຣະສັບໄປທີ່ 800-468-7422 ຫລື ທາງອອນລາຍນ໌ໄດ້ທີ່ www.dshs.wa.gov/dcs.

ການຈ່າຍເງິນລ້ຽງລູກທີ່ບໍ່ໄດ້ຈ່າຍກາຍຜ່ານມາອາດຈະໄປ ຫລື ອາດຈະບໍ່ໄປຫາທ່ານ.

1. ຖ້າຫາກວ່າທ່ານ ແລະ ເດັກນ້ອຍຂອງທ່ານບໍ່ເຄີຍໄດ້ຮັບການຊ່ວຍເຫລືອສາທາຣະນະຈັກເທື່ອ, ພະແນກ DCS ຈະສົ່ງເງິນໄປໃຫ້ທ່ານ.
2. ຖ້າຫາກວ່າທ່ານໄດ້ຮັບການຊ່ວຍເຫລືອສາທາຣະນະ ແລະ ບໍ່ມີໜີ້ໄດ້ຖືກແຕ່ງຕັ້ງໃສ່ອຳນາດສານບ່ອນໃດ,ພະແນກ DCS ຈະສົ່ງເງິນໄປໃຫ້ທ່ານ.
3. ຖ້າຫາກວ່າທ່ານໄດ້ຮັບການຊ່ວຍເຫລືອສາທາຣະນະໃນຜ່ານມາ,ພະແນກ DCS ຈະແຈກຢາຍເງິນລ້ຽງລູກທີ່ບໍ່ໄດ້ຈ່າຍກາຍຜ່ານມາທີ່ໄດ້ຮັບຫລັງຈາກທີ່ທ່ານຢຸດຮັບເອົາການຊ່ວຍເຫລືອສາທາຣະນະຕາມຕໍ່ລົງໄປນີ້:
   a. ທຳອິດ, ໄປໃສ່ເງິນລ້ຽງລູກບໍ່ໄດ້ຈ່າຍກາຍຜ່ານມາຕ່າງໆທີ່ຍັງຕິດທ່ານຢູ່ຊຶ່ງບໍ່ເຄີຍຖືກແຕ່ງຕັ້ງໃສ່ຣັດຈັກເທື່ອ.
   b. ທີສອງມາ, ໄປໃສ່ເງິນລ້ຽງລູກບໍ່ໄດ້ຈ່າຍກາຍຜ່ານມາຕ່າງໆທີ່ຖືກແຕ່ງຕັ້ງຊົ່ວຄາວໃຫ້ແກ່ຣັດ ໂດຍການແຕ່ງຕັ້ງທີ່ຖືກເຮັດໃນ ຫລື
      ຫລັງຈາກເດືອນອົກໂຕເບີ 1, 1997, ແລະ ກ່ອນເດືອນອົກໂຕເບີ 1, 2008, ແລະ
      ຊຶ່ງບໍ່ເປັນພາກສ່ວນນຶ່ງຂອງເງິນລ້ຽງລູກບໍ່ໄດ້ຈ່າຍກາຍຜ່ານມາທີ່ຖືກແຕ່ງຕັ້ງຖາວອນ ຕາມທີ່ຖືກບັນຣະຍາຍຢູ່ໃນພາກສ່ວນ d ຢູ່ຂ້າງລຸ່ມນີ້.
   c. ທີສາມມາ, ໄປໃສ່ເງິນລ້ຽງລູກບໍ່ໄດ້ຈ່າຍກາຍຜ່ານມາຕ່າງໆທີ່ຍັງຕິດທ່ານຢູ່ສຳລັບການອູ້ມຊູດ້ານພະຍາບານຂອງເດັກນ້ອຍ.
   d. ທີສີ່ມາ, ໃສ່ເງິນລ້ຽງລູກບໍ່ໄດ້ຈ່າຍກາຍຜ່ານມາຕ່າງໆທີ່ຖືກແຕ່ງຕັ້ງຖາວອນໃຫ້ແກ່ຣັດ ໂດຍການແຕ່ງຕັ້ງຂອງເງິນຊ່ວຍເຫລືອສາທາຣະນະກ່ອນເດືອນອົກໂຕເບີ 1, 1997, ຫລື ຖືກແຕ່ງຕັ້ງຫລັງຈາກວັນທີທີ່ເງິນຊວຍເຫລືອສາທາຣະນະໄດ້ຖືກຈ່າຍອອກໃຫ້ທານໃນເດືອນນັ້ນ.
   e. ທີຫ້າມາ, ໃສ່ການອູ້ມຊູດ້ານພະຍາບານຂອງເດັກນ້ອຍທີ່ບໍ່ໄດ້ຈ່າຍກາຍຜ່ານມາຊຶ່ງຖືກແຕ່ງຕັ້ງໃຫ້ແກ່ຣັດ.
   f. ການຈ່າຍເງິນທີ່ໄດ້ຮັບມາຈາກພະແນກ IRS ຈະຖືກແຈກຢາຍໄປໃສ່ເງິນລ້ຽງລູກບໍ່ໄດ້ຈ່າຍກາຍຜ່ານມາແລະ ການອູ້ມຊູດ້ານພະຍາບານບໍ່ໄດ້ຈ່າຍກາຍຜ່ານມາທີ່ຖືກແຕ່ງຕັ້ງໃຫ້ແກ່ຣັດກ່ອນທີ່ຈະຖືກແຈກຢາຍໄປໃສ່ເງິນລ້ຽງລູກບໍ່ໄດ້ຈ່າຍກາຍຜ່ານມາຕ່າງໆທີ່ຍັງຕິດທານຢູ່.
4. ຖ້າຫາກວ່າພໍ່ແມ່ຜູ້ທີ່ບໍ່ມີຄວາມຄຸ້ມຄອງຕິດໜີ້ເງິນລ້ຽງລູກທີ່ບໍ່ໄດ້ຈ່າຍກາຍຜ່ານມານຳຫລາຍກວ່າຄອບຄົວນຶ່ງ, ພະແນກ DCS ຈະແບ່ງປັນເງິນທີ່ຖືກເກັບມາໄດ້ໃຫ້ສົມສ່ວນກັນໃນຣະຫວ່າງຄອບຄົວ.

## ການກອບກູ້ເອົາເງິນຈ່າຍຄືນ

ອີງຕາມກົດໝາຍ RCW 26.23.035(3) ແລະ 74.20A.270, ພະແນກ DCS ກອບກູ້ເອົາເງິນຈ່າຍຈາກທ່ານຄືນຊຶ່ງເປັນເງິນຈ່າຍເກີນແລະເງິນຈ່າຍທີ່ຖືກສົ່ງໄປໃຫ້ທ່ານດ້ວຍຄວາມຜິດພາດ.

1. ທ່ານຕ້ອງໄດ້ສົ່ງເງິນຈ່າຍຄືນທີ່ພະແນກ DCS ສົ່ງໄປໃຫ້ທ່ານເຖິງແມ່ນວ່າຖ້າຫາກວ່າ:
    a. ພະແນກ DCS ສົ່ງເງິນໄປໃຫ້ທ່ານດ້ວຍຄວາມຜິດພາດ.
    b. ພະແນກ DCS ສົ່ງເງິນໄປໃຫ້ທ່ານຫລາຍກວ່າທີ່ພໍ່ແມ່ຜູ້ທີ່ບໍ່ມີຄວາມຄຸ້ມຄອງຕິດໜີ້ຢູ່, ຍັງຖືກເອີ້ນອີກວ່າແມ່ນເງິນຈ່າຍເກີນ.
2. ຖ້າຫາກວ່າທ່ານມີສຳນວນການບໍລິການຈ່າຍເງິນເທົ່ານັ້ນ (PSO), ພະແນກ DCS ຈະກອບກູ້ເອົາເງິນຈ່າຍເກີນກ່ອນໜູ່ແລະເງິນຈ່າຍຊຶ່ງຖືກສົ່ງໄປໃຫ້ທ່ານດ້ວຍຄວາມຜິດພາດໂດຍການກັກເອົາເງິນຈາກເງິນຈ່າຍມາໃນອະນາຄົດທີ່ໄດ້ຮັບສຳລັບທ່ານ. ກົດໝາຍ RCW 26.23.035(3) ອະນຸຍາດການກະທຳອັນນີ້ໂດຍປາດສະຈາກການແຈ້ງການໃຫ້ທ່ານຊາບ.
    a. ພະແນກ DCS ຈະກັກເອົາໄວ້ໂດຍອັດຕະໂນມັດໂລດ 10 ເປີເຊັນຂອງເງິນຈ່າຍລ້ຽງລູກປັດຈຸບັນທີ່ຈ່າຍມາໃນອະນາຄົດ.
    b. ພະແນກ DCS ຈະກັກເອົາໄວ້ໂດຍອັດຕະໂນມັດໂລດ 100 ເປີເຊັນຂອງເງິນຈ່າຍລ້ຽງລູກບໍ່ຈ່າຍກາຍຜ່ານມາທີ່ຈ່າຍມາໃນອະນາຄົດ.
3. ພະແນກ DCS ຈະທຳການເກັບເອົາເງິນແບບອື່ນທີ່ຖືກອະນຸຍາດໂດຍກົດໝາຍ RCW 74.20A.270 ເພື່ອຈະກອບກູ້ເອົາເງິນຈ່າຍຄືນແລະເງິນຊຶ່ງຖືກສົ່ງໄປໃຫ້ທ່ານດ້ວຍຄວາມຜິດພາດ. ອັນນີ້ຈະໃຊ້ການໄດ້ເຖິງແມ່ນວ່າຫລັງຈາກທີ່ທ່ານຢຸດໄດ້ຮັບເງິນລ້ຽງລູກໂດຍຜ່ານພະແນກ DCS. ຖ້າຫາກວ່າພະແນກ DCS ເລືອກເອົາທາງເລືອກນີ້, ພະແນກ DCS ຈະສົ່ງໃບແຈ້ງການໄປໃຫ້ທ່ານ. ຖ້າຫາກວ່າບໍ່ໄດ້ຮັບການຄັດຄ້ານແນວໃດ, ພະແນກ DCS ໄດ້ຖືກອະນຸຍາດທີ່ຈະ:
    a. ສົ່ງໄປໃຫ້ນາຍຈ້າງຂອງທ່ານ ຫລື ບຸກຄົນ ຫລື ອົງການອື່ນທີ່ກຳຊັບສິນມີຣາຄາໄວ້ໃຫ້ທ່ານ ໃບຄຳສັ່ງກັກເອົາເງິນຣາຍໄດ້ສຳລັບເງິນລ້ຽງລູກ. ຄຳສັ່ງ/ໃບແຈ້ງການບົ່ງໃຫ້ນາຍຈ້າງຂອງທ່ານ ຫລື ບຸກຄົນ ຫລື ອົງການອື່ນໃຫ້ກັກເອົາຈຳນວນຂອງການຈ່າຍເງິນດ້ວຍຄວາມຜິດພາດ ແລະ/ຫລື ການຈ່າຍເງິນເກີນຈາກເງິນເຮັດວຽກຂອງທ່ານ, ຣາຍໄດ້, ແລະ ຊັບສິນມີຣາຄາຂອງທ່ານ.
    b. ຍື່ນການຜູກມັດໃສ່ຊັບສິນທີ່ດິນເຮືອນຊານ ແລະ ຊັບສິນບັດສ່ວນຕົວຂອງທ່ານ.
    c. ໃຊ້ທາງແກ້ໄຂການເກັບເອົາເງິນຂອງພະແນກ DCS ຕ່າງໆທີ່ມີໄວ້ໃຫ້ພາຍໃຕ້ກົດໝາຍມາດຕຣາ Chapters 26.09, 26.18, 26.23, ແລະ 74.20 RCW.

## ຣາຍຣະອຽດກ່ຽວກັບຊົນເຜົ່າ

ນອກຈາກວ່າພະແນກ DCS ແລະ ຊົນເຜົ່າ ມີ ສັນຍາທີ່ຈະເຮັດຢ່າງນັ້ນ, ວິທີການບັງຄັບການເກັບເອົາເງິນ ແລະ ການເກັບເອົາເງິນຂອງພະແນກ DCS ທີ່ຖືກບົ່ງຢູ່ໃນຟອມໃບນີ້ບໍ່ໃຊ້ໃສ່ພະນັກງານຜູ້ທີ່ເຮັດວຽກໃຫ້ຊົນເຜົ່າ, ກິຈການຄ້າທີ່ເປັນເຈົ້າຂອງໂດຍຊົນເຜົ່າ, ຫລື ກິຈການຄ້າທີ່ເປັນເຈົ້າຂອງໂດຍຄົນອິນດຽນຊຶ່ງຕັ້ງຢູ່ໃນເຂດແດນສະຫງວນ. ຖ້າຫາກວ່າພໍ່ແມ່ຜູ້ທີ່ບໍ່ມີຄວາມຄຸ້ມຄອງເປັນພະນັກງານຂອງຊົນເຜົ່າອິນດຽນ,ກິຈການຄ້າທີ່ເປັນເຈົ້າຂອງໂດຍຊົນເຜົ່າ, ຫລື ກິຈການຄ້າທີ່ເປັນເຈົ້າຂອງໂດຍຄົນອິນດຽນຊຶ່ງຕັ້ງຢູ່ໃນເຂດແດນສະຫງວນ,ພະແນກ DCS ອາດຈະ:

1. ຮ້ອງຂໍໃຫ້ຊົນເຜົ່າທີ່ຈະບັງຄັບໃຊ້ຄຳສັ່ງຈ່າຍເງິນລ້ຽງລູກຂອງທ່ານ.ພະແນກ DCS ອາດຈະເຮັດແນວນີ້ຖ້າຫາກວ່າຣັດວໍຊິງຕັນ ແລະ ຊົນເຜົ່າມີການດຳເນີນການທີ່ຈະເຮັດຢ່າງນີ້.
2. ຍື່ນການຟ້ອງຂຶ້ນສານຊົນເຜົ່າບ່ອນນຶ່ງເພື່ອຈະກໍຕັ້ງ ຫລື ບັງຄັບໃຊ້ຄຳສັ່ງຈ່າຍເງິນລ້ຽງລູກຂອງທ່ານ. ຖ້າຫາກວ່າພະແນກ DCS ຍື່ນການຟ້ອງຮ້ອງຂຶ້ນສານຊົນເຜົ່າ,ພະແນກ DCS ອາດຈະໃຊ້ວິທີການທີ່ຖືກວາງອອກມາຢູ່ໃນສັນຍາຣະຫວ່າງຣັດວໍຊິງຕັນ ແລະ ຊົນເຜົ່າອິນດຽນ ຫລື ໃຊ້ວິທີການຂອງສານຊົນເຜົ່າທີ່ມີຢູ່ໃນປັດຈຸບັນ.

ພະແນກ DCS ອາດຈະແຕ່ງຕັ້ງກໍຣະນີຂອງທ່ານໃສ່ໜ່ວຍບັງຄັບເກັບເງິນຂອງຊົນເຜົ່າຖ້າຫາກວ່າສິ່ງໃດສິ່ງນຶ່ງຂອງສິ່ງຕໍ່ລົງໄປນີ້ກ່ຽວກັບກໍຣະນີຂອງທ່ານ.
1. ບໍ່ວ່າຝ່າຍໃດຝ່າຍນຶ່ງຕໍ່ຄຳສັ່ງຈ່າຍເງິນລ້ຽງລູກຂອງທ່ານ ຫລື ເດັກນ້ອຍຂອງທ່ານເປັນ/ແມ່ນສະມາຊິກຂອງຊົນເຜົ່າອິນດຽນ.
2. ພໍ່ແມ່ຜູ້ທີ່ບໍ່ມີຄວາມຄຸ້ມຄອງເປັນພະນັກງານຂອງຊົນເຜົ່າອິນດຽນ,ກິຈການຄ້າທີ່ເປັນເຈົ້າຂອງໂດຍຊົນເຜົ່າ, ຫລື ກິຈການຄ້າທີ່ເປັນເຈົ້າຂອງໂດຍຄົນອິນດຽນຊຶ່ງຕັ້ງຢູ່ໃນເຂດແດນສະຫງວນ ຫລື ດິນຫລວງກຳເອົາໄວ້.
3. ບໍ່ວ່າຝ່າຍໃດຝ່າຍນຶ່ງຕໍ່ຄຳສັ່ງຈ່າຍເງິນລ້ຽງລູກຂອງທ່ານໄດ້ຖືກຄຸ້ມກັນໂດຍການດຳເນີນການ ຫລື ສັນຍາຕົກລົງໃນເງິນລ້ຽງລູກຮ່ວມນຳກັນ.
4. ບໍ່ວ່າຝ່າຍໃດຝ່າຍນຶ່ງຕໍ່ຄຳສັ່ງຈ່າຍເງິນລ້ຽງລູກຂອງທ່ານໄດ້ຮັບການບໍລິການຈາກເງິນ TANF ຊົນເຜົ່າ ຫລື ໂຄງການເກັບເງິນລ້ຽງລູກຂອງຊົນເຜົ່າ.
5. ສຳນວນເອກສານຂອງທ່ານກ່ຽວພັນນຳບັນຫາຊົນເຜົ່າ.

## ກົດໝາຍ ແລະ ນະໂຍບາຍຊຶ່ງສະທ້ອນເຖິງເງິນລ້ຽງລູກ

ມາຕຣາຂອງກົດໝາຍດັດແປງຂອງຣັດວໍຊິງຕັນ Revised Code of Washington (RCW) ແລະ ກົດບັນຍັດປົກຄອງຣັດວໍຊິງຕັນ Washington Administrative Code (WAC) ຕໍ່ລົງໄປນີ້ປົກຄອງການບໍລິການທີ່ພະແນກ DCS ເອົາໃຫ້.

ມາດຕຣາ 26.09 RCW ມາດຕຣາ 388-14A WAC
ມາດຕຣາ 26.18 RCW
ມາດຕຣາ 26.21A RCW
ມາດຕຣາ 26.23 RCW
ມາດຕຣາ 74.20 RCW
ມາດຕຣາ 74.20A RCW

ຂໍ້ບັນຍັດຂອງຂອບເຂດອາດຈະກ່ຽວນຳໜີ້ເງິນລ້ຽງລູກ. ຖ້າຫາກວ່າມັນກ່ຽວນຳ,ພໍ່ແມ່ຜູ້ທີ່ບໍ່ມີຄວາມຄຸ້ມຄອງອາດຈະໃຊ້ຂໍ້ບັນຍັດຂອງຂອບເຂດ ໃຫ້ເປັນການຕໍ່ສູ້ຕໍ່ການຕິດໜີ້ເງິນລ້ຽງລູກທັງໝົດ ຫລື ສ່ວນນຶ່ງຕໍ່ໄປອີກແລ້ວ.

## ການໂທຣະສັບ

ໂທຣະສັບໄປຫາຣະບົບໂທຣະສັບອັຕໂນມັດ "KIDS" ໄດ້ທີ່ເລກ 800-442-5437 ເພື່ອເອົາຣາຍຣະອຽດກ່ຽວກັບກໍຣະນີຂອງທ່ານ. ກະຣຸນາໃຊ້ຣະບົບອັນນີ້ໃຫ້ຫລາຍເທົ່າທີ່ຈະຫລາຍໄດ້. ຖ້າຫາກວ່າທ່ານມີເຣື່ອງທີ່ຣະບົບ "KIDS" ບໍ່ສາມາດແກ້ໄຂໄດ້, ຈົ່ງໂທຣະສັບໄປຫາຫ້ອງການຂອງພະແນກ DCS ບ່ອນທີ່ກຳກໍຣະນີຂອງທ່ານ. ຈື່ໄວ້ວ່າ, ການໂທຣະສັບມາຈະໃຊ້ເວລາອອກຈາກວຽກງານການເກັບເງິນແນວອື່ນໃສ່ໃນສຳນວນເອກສານຂອງທ່ານ. ການລຸດຜ່ອນຈຳນວນໂທຣະສັບລົງຈະອະນຸຍາດໃຫ້ພະແນກ DCS ທີ່ຈະຮັບໃຊ້ທ່ານໄດ້ດີກວ່າເກົ່າ.

ຖ້າຫາກວ່າທ່ານຕິດຕໍ່ມາຫາພະແນກ DCS, ຈົ່ງໃຊ້ເລກໂທຣະສັບທີ່ຖືກບົ່ງຢູ່ຂ້າງລຸ່ມນີ້.ກະຣຸນາໃຊ້ເລກໂທຟຣີສຳລັບການໂທທາງໄກເທົ່ານັ້ນ. ການບໍຣິການ TTY/TDD ຈະມີໄວ້ໃຫ້ສຳລັບຄົນເສັຽອົງຄະດ້ານການຟັງສຽງ ຫລື ການປາກເວົ້າ.

| | | | |
|---|---|---|---|
| Seattle: | (206) 341-7000 ຫລື (800) 526-8658 | Vancouver: | (360) 696-6100 ຫລື (800) 345-9984 |
| Tacoma: | (253) 597-3700 ຫລື (800) 345-9976 | Wenatchee: | (509) 886-6800 ຫລື (800) 535-1113 |
| Everett: | (425) 438-4800 ຫລື (800) 729-7580 | Yakima: | (509) 249-6000 ຫລື (800) 441-0859 |
| Spokane: | (509) 363-5000 ຫລື (800) 345-9982 | Olympia: | (360) 664-6900 ຫລື (800) 345-9964 |
| Kennewick: | (509) 374-2000 ຫລື (800) 345-9981 | | |

ເພື່ອຣາຍຣະອຽດເພີ້ມເຕີມກ່ຽວກັບການຈ່າຍເງິນທາງເອເລກໂຕຣນິກ, ຈົ່ງໂທໄປທີ່ເລກ 800-468-7422 ຫລື ແວ່ເຂົ້າເບິ່ງແວບໄຊທ໌ຂອງພະແນກ DCS ໄດ້ທີ່ www.dshs.wa.gov/dcs. ທ່ານສາມາດລົງທະບຽນເພື່ອຈະເບິ່ງປະວັດການຈ່າຍເງິນຂອງທ່ານທາງອອນລາຍນ໌ໄດ້ທີ່ https://secureaccess.wa.gov.

ຈະບໍ່ມີບຸກຄົນໃດ, ຍ້ອນວ່າຜິວພັນ, ສີສັນ, ເຊື້ອຊາດດັ້ງເດີມ, ລັດທິ, ສາສນາ, ເພດ, ອາຍຸ, ຫລື ຄວາມເສັຽອົງຄະ, ຈະຖືກແບ່ງແຍກຈີນຊັ້ນວັນນະຢູ່ໃນວຽກງານ, ການບໍຣິການ, ຫລື ແງ່ໃດແງ່ນຶ່ງຂອງກິຈກັມຂອງໂຄງການ. ຟອມໃບນີ້ມີໄວ້ໃຫ້ໃນຮູບແບບອື່ນຕາມຄຳຮ້ອງຂໍ.